# ແມ່ຖືພາທຸກຄົນຄວນສືບຕໍ່ການໄປຝາກທ້ອງ ແລະ ເກີດລູກຢູ່ສະຖານທີ່ສາທາລະນະສຸກ ໃນໄລຍະການແພລະບາດຂອງພະຍາດ ໂຄວິດ-19

## ຖ້າທ່ານແມ່ນແມ່ຖືພາ:





ໃຫ້ປະຕິບັດຕາມຄຳແນະນຳຂອງຜະດຸງຄັນ ຫຼື ແພດ-ໝໍ ທີ່ເບິ່ງແຍງໄລຍະຖືພາ ແລະ ໃຫ້ປຶກສາຮ່ວມກັນ. ໃນການຝາກທ້ອງບາງຄັ້ງແມ່ນນອກສະຖານທີ່ບໍລິການສາທາລະນະສຸກ ໂດຍຜ່ານການໃຫ້ຄຳປຶກສາທາງໄກທາງວິດີໂອ ຫຼື ທາງໂທລະສັບ.



ສວມໃສ່ຜ້າອັດປາກ, ຮັກສາໄລຍະຫ່າງຈາກຄົນອື່ນ ແລະ ລ້າງມືເປັນປະຈຳ ໃນລະຫວ່າງ ແລະ ຫຼັງຈາກກັບມາຈາກສະຖານທີ່ບໍລິການສາທາລະນະສຸກ.



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄອ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

Australian Aid
ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

# ຖ້າທ່ານກຳລັງຖືພາ ແລະ ມີຂໍ້ຈຳກັດໃນການເຂົ້າເຖິງສະຖານທີ່ບໍລິການສາທາລະນະສຸກ

UNFPA

ໃຫ້ຖາມແພດ-ໝໍ ຫຼື ຜູ້ຊ່ຽວຊານ ເພື່ອອະທິບາຍກ່ຽວກັບອາການ ຫລື ສັນຍານ ອັນຕະລາຍຕ່າງໆ ເພື່ອຈະໄດ້ຮູ້ວ່າເວລາໃດ ຄວນພົບແພດແບບເຊິ່ງໜ້າ, ເຊິ່ງຄວນຂໍການຊ່ວຍເຫຼືອທັນທີ ຖ້າທ່ານມີອາການ:



ລູກໃນທ້ອງມີຄວາມຜິດປົກກະຕິ ເຊັ່ນ: ບໍ່ມີການເໜັງຕີງ



ມີອາການເຈັບຫົວຢ່າງຮຸນແຮງ ຫຼື ມີອາການເຈັບຫົວແກ່ຍາວ ຫຼາຍວັນບວກກັບອາການມົວຕາ




ເຈັບຊ່ອງທ້ອງຢ່າງຮຸນແຮງ ຫຼື ມີການຫົດຕົວຂອງມົດລູກປະຈຳ ກ່ອນການຖືພາໄດ້ 37 ອາທິດ



ມີອາການບວມແຮງຢູ່ໃບໜ້າ, ມື, ຂໍ່ມື-ຕີນ ແລະ ຕີນ




ມີອາການເລືອດອອກທາງຊ່ອງຄອດ ຫຼື ມີນ້ຳໄຫຼອອກມາຈາກຊ່ອງຄອດ ກ່ອນຮອດ 37 ອາທິດ



ສັ່ນກະຕຸກ



ຫາຍໃຈຫອບ ຫຼື ຫາຍໃຈລຳບາກ



ຄວາມດັນເລືອດສູງ



ມີໄຂ້ ຫຼື ອ່ອນເພຍຈົນບໍ່ມີແຮງ ທີ່ຈະລຸກອອກຈາກຕຽງ



ມີອາການປວດຮາກ ຫຼື ຮາກອອກຫຼາຍ



ຖ້າທ່ານຫາກມີໜຶ່ງໃນອາການເຫຼົ່ານີ້, ໃຫ້ຮີບຮ້ອນໄປຫາສະຖານທີ່ບໍລິການສາທາລະນະສຸກ ທີ່ຢູ່ໃກ້ບ້ານທ່ານໃຫ້ໄວທີ່ສຸດ



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄອ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

Australian Aid

ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

# ຖ້າທ່ານເລີ່ມມີອາການກ່ຽວກັບລະບົບຫາຍໃຈ ຫຼື ອາການຄ້າຍຄືພະຍາດ ໂຄວິດ-19 ເຊັ່ນ: ໄອ ແລະ ມີໄຂ້ຂະນະທີ່ກຳລັງຖືພາ, ໃຫ້ແຈ້ງແກ່ຜະດຸງຄັນ ຫຼື ແພດ-ໝໍທັນທີ ແລະ ປະຕິບັດຕາມຄຳແນະນຳຢ່າງເຄັ່ງຄັດ

ຖ້າແພດໝໍແນະນຳໃຫ້ທ່ານໄປສະຖານບໍລິການສາທາລະນະສຸກ, ໃຫ້ປະຕິບັດຕາມຄຳແນະນຳລຸ່ມນີ້:



ຫຼີກລ່ຽງການໃຊ້ລົດນຳສົ່ງສາທາລະນະ ແລະ ໃຫ້ນຳໃຊ້ລົດນຳສົ່ງທີ່ເປັນສ່ວນຕົວ ຫຼື ລົດພະຍາບານໃນກໍລະນີສຸກເສີນ, ພ້ອມທັງໃຫ້ແຈ້ງອາການຂອງທ່ານໃຫ້ຄົນຂັບລົດຊາບນຳ






ຫຼີກລ່ຽງການສຳພັດກັບຄົນເຈັບ ແລະ ຜູ້ອື່ນໆ, ພ້ອມທັງລໍຖ້າຄຳແນະນຳຈາກແພດໝໍ



ໃຫ້ປະຕິບັດຕາມມາດຕະການປ້ອງກັນ, ສວມໃສ່ໜ້າກາກອະນາໄມ ຫຼື ອັດດັງ ແລະ ປາກຂອງທ່ານໃນຂະນະທີ່ສົນທະນາກັບຜູ້ທີ່ຂັບລົດນຳສົ່ງ ຫຼື ລົດໂຮງໝໍ ລວມເຖິງ ບັນດາພະນັກງານແພດໝໍໃນໂຮງໝໍ



ຖ້າທ່ານມີອາການເຈັບທ້ອງເກີດລູກສຸກເສີນ (ມີຄວາມເຈັບທ້ອງເກີດລູກ/ບັນຫາອື່ນໆ ເຊັ່ນ: ມີເລືອດອອກ ຫຼື ອາການຊັກ ແລະ ອື່ນໆ), ໃຫ້ແຈ້ງແພດໝໍໂດຍດ່ວນ



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄອ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

Australian Aid

ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

# ແມ່ຍິງທຸກຄົນຄວນໄດ້ເກີດລູກຢູ່ໂຮງໝໍ ຫຼື ສະຖານທີ່ບໍລິການສາທາລະນະສຸກ ເພື່ອຄວາມປອດໄພຂອງແມ່ ແລະ ເດັກ



ຖ້າທ່ານຢູ່ໃນກໍລະນີເກີດລູກກ່ອນກຳນົດ, ຫຼື ນ້ຳຄາວປາແຕກ, ໃຫ້ໂທຫາແພດໝໍທີ່ໃຫ້ການດູແລເພື່ອຂໍຄຳແນະນຳ ແລະ ແຈ້ງໃຫ້ພວກເຂົາຮັບຮູ້ ກ່ຽວກັບບັນຫາທາງເດີນຫາຍໃຈ ຫຼື ມີອາການອື່ນທີ່ກ່ຽວຂ້ອງກັບພະຍາດ ໂຄວິດ-19, ເພື່ອໃຫ້ແພດໝໍສາມາດຊ່ວຍເຫລືອໃນການວາງແຜນການປິ່ນປົວ ຫຼື ການສິ່ງຕໍ່ທີ່ອາດຈະເກີດຂຶ້ນ.





ເມື່ອມາເຖິງສະຖານທີ່ບໍລິການສາທາລະນະສຸກ, ເຖິງວ່າທ່ານຈະມີອາການທີ່ກ່ຽວຂ້ອງກັບພະຍາດ ໂຄວິດ-19, ທ່ານກໍ່ຄວນໄດ້ຮັບ ການດູແລ ແລະ ໄດ້ຮັບຄວາມເອົາໃຈໃສ່, ເຊິ່ງທ່ານອາດຈະໄດ້ເກີດລູກໃນສະຖານທີ່ພິເສດທີ່ກຳນົດໄວ້.



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄອ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA https://www.unfpa.org/covid-19FAQs

WHO https://bit.ly/30wLQMv

Australian Aid
ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

UNFPA

# ແມ່ຍິງທຸກຄົນມີສິດທີ່ຈະໄດ້ຮັບການດູແລປິ່ນປົວດ້ວຍຄວາມເຫັນອົກເຫັນໃຈ, ໃຫ້ກຽດ ແລະ ດ້ວຍຄວາມເຄົາລົບ ຕະຫຼອດໄລຍະການເກີດລູກຂອງພວກເຂົາ, ໂດຍແມ່ຍິງທຸກຄົນມີສິດໃນການ:





ໄດ້ຮັບຄວາມເຄົາລົບໃນການຕັດສິນໃຈ
ແລະ ທາງເລືອກຂອງແມ່



ໄດ້ຮັບຂໍ້ມູນຂ່າວສານທີ່ຖືກຕ້ອງ ແລະ ມີສິດ
ເລືອກວິທີ ທີ່ຕົນຈະເກີດລູກ

ເລືອກ ແລະ ຕັດສິນໃຈ ກ່ຽວກັບການເກີດລູກຂອງຕົນ
ອີງຕາມຄວາມເໝາະສົມ ແລະ ດ້ວຍຄວາມສະໝັກໃຈ



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄອ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ
ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

Australian Aid

ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

ຫຼັງຈາກເກີດລູກແລ້ວ, ແມ່ບໍ່ຄວນຖືກແຍກອອກຈາກລູກ
ຂອງພວກເຂົາທັນທີ. ໂດຍບໍ່ກ່ຽວກັບສະພາບໂຄວິດ-19,
ເຊິ່ງແມ່ ແລະ ເດັກທຸກຄົນຕ້ອງໄດ້ຮັບການຊ່ວຍເຫຼືອໃນການ:



ໃຫ້ແມ່ ແລະ ເດັກເກີດໃໝ່ໄດ້ຢູ່ນຳກັນ



ສະໜັບສະໜູນໃຫ້ແມ່ໃຫ້ນົມລູກທັນທີ



ໃຫ້ແມ່ ແລະ ເດັກເກີດໃໝ່ໄດ້ໃກ້ຊິດກັນໂດຍ
ໃຫ້ສຳຜັດໃກ້ຊິດຄວາມອົບອຸ່ນຈາກແມ່ ເຊິ່ງ
ສິ່ງຜົນຕໍ່ພັດທະນາການຂອງເດັກອ່ອນ



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄອ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ
ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

Australian Aid

ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

UNFPA

## ຫຼັງຈາກທີ່ແມ່ ແລະ ເດັກອອກຈາກໂຮງໝໍແລ້ວ, ການດູແລຫລັງເກີດໃນບາງຄັ້ງສາມາດປະຕິບັດໄດ້ຜ່ານຫຼາຍຊ່ອງທາງ ເຊັ່ນ: ປຶກສາແພດ-ໝໍ ທາງໄກໂດຍຜ່ານການໂທວິດີໂອ ຫຼື ຜ່ານໂທລະສັບ ເປັນຕົ້ນ



ໃຫ້ປຶກສາກັບແພດ-ໝໍ ທີ່ໃຫ້ການດູແລ ວ່າທ່ານສາມາດດຳເນີນການກວດຫຼັງເກີດລູກທາງໄກຜ່ານວິດີໂອ ຫຼື ໂທລະສັບໄດ້ ຫຼື ບໍ່ ແລະ ໃຫ້ປະຕິບັດຕາມທີ່ແພດ-ໝໍແນະນຳ



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ້, ໄປ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ
ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

Australian Aid

ສະໜັບສະໜູນໂດຍ:
ລັດຖະບານປະເທດອົດສະຕາລີ

# ຖ້າທ່ານກຳລັງຢູ່ໃນໄລຍະໃຫ້ນົມລູກ ແລະ ທ່ານມີອາການ ຂອງພະຍາດ ໂຄວິດ-19, ໃຫ້ທ່ານປະຕິບັດຕາມ ມາດຕະການດັ່ງລຸ່ມນີ້:



ສວມໃສ່ຜ້າອັດປາກໃນຂະນະທີ່ອຸ້ມລູກ ແລະ ຕອນກຳລັງໃຫ້ນົມລູກ



ລ້າງມືທຸກຄັ້ງກ່ອນການສຳຜັດລູກ





ຮັກສາຄວາມສະອາດພື້ນຜິວຕ່າງໆ



ແຈ້ງໃຫ້ແພດ-ໝໍ ທີ່ກ່ຽວຂ້ອງຊາບ ແລະ ປະຕິບັດຕາມຄຳແນະນຳຢ່າງເຄັ່ງຄັດ



ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່ 020 5406 6777 ຫຼື ສາຍດ່ວນ 165 ຫຼື 166
ຖ້າທ່ານຮູ້ສຶກມີອາການໄຂ, ໄປ ຫຼື ຫາຍໃຈຝືດ, ໃຫ້ໄປປຶກສາກັບແພດໝໍຂອງທ່ານທັນທີ
ແລະ ປະຕິບັດຕາມຄຳແນະນຳຂອງແພດໝໍ.

UNFPA
https://www.unfpa.org/covid-19FAQs

WHO
https://bit.ly/30wLQMv

ສະໜັບສະໜູນໂດຍ:
ລັດຖະບານປະເທດອິດສະຕາລີ